ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 1917/ອຄ.ກພນ

ນະຄອນຫຼວງວຽງຈັນ, ວັນທີ 11 SEP 2012

# ຄຳສັ່ງແນະນຳ

ເຖິງ: ພະແນກ ອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ

ເລື່ອງ: ການຈັດຕັ້ງ ແລະ ການເຄື່ອນໄຫວຂອງເຈົ້າໜ້າທີ່ກວດກາການຄ້າ.

- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ສະບັບເລກທີ 522/ນຍ, ລົງວັນທີ 23 ທັນວາ 2011, ວ່າດ້ວຍ ການຈັດຕັ້ງ ແລະການເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະ ການຄ້າ,

ປະຕິບັດຕາມແຈ້ງການຂອງຄະນະເລຂາທິການລັດຖະບານ ສະບັບເລກທີ 2274/ຄລບ, ລົງວັນທີ 10 ທັນວາ 2009, ໃຫ້ຍົກລະດັບນິຕິກຳຈາກຂໍ້ຕົກລົງຂອງລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວຕ້ອງການເຈົ້າໜ້າທີ່ກວດກາການຄ້າ ຂຶ້ນເປັນດຳລັດຂອງນາຍົກລັດຖະມົນຕີວ່າດ້ວຍການກວດກາການຄ້າ,

ກະຊວງອຸດສາຫະກຳ ແລະ ການຄ້າ ຂໍແຈ້ງມາຍັງ ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ຊາບທົ່ວເຖິງກັນວ່າ ໃນເວລານີ້ດຳລັດ ວ່າດ້ວຍການກວດກາການຄ້າ ກຳລັງລໍຖ້າການລົງລາຍເຊັນຈາກ ທ່ານນາຍົກລັດຖະມົນຕີ ແລະອອກມາເມື່ອໃດແລ້ວ, ທາງກົມການຄ້າພາຍໃນຈະມາເຜີຍແຜ່ ແລະຈັດຕັ້ງປະຕິບັດຕາມເນື້ອໃນຈິດໃຈໃໝ່ຂອງດຳລັດວ່າດ້ວຍການກວດກາການຄ້ານັ້ນໂລດ.

ໃນປະຈຸບັນ, ທາງພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫລວງໄດ້ປະຕິບັດພາລະບົດບາດຂອງຕົນ ຕາມຂໍ້ຕົກລົງ ຂອງທ່ານລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 0035/ອຄ.ຈພງ, ລົງວັນທີ 6 ມັງກອນ 2012 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ; ຫຼາຍໆແຂວງໄດ້ມີການປັບປຸງ ການຈັດຕັ້ງຕາມພາລະບົດບາດໃໝ່ ແລະສັບຊ້ອນພະນັກງານຄືນໃໝ່, ມີພະນັກງານກວດກາການຄ້າຈຳນວນໜຶ່ງ ຖືກຍົກຍ້າຍ ໄປຮັບຜິດຊອບວຽກອື່ນ ແລະມີການແຕ່ງຕັ້ງພະນັກງານກວດກາການຄ້າໃໝ່ຕື່ມ ແລະວຽກງານກວດກາການຄ້າຖືວ່າຢຸດສະງັກ ຫລືວ່າບໍ່ໄດ້ເຄື່ອນໄຫວຢ່າງເຕັມເມັດເຕັມໜ່ວຍຕາມທີ່ສົມຄວນເປັນ.

ໃນໄລຍະລໍຖ້າການລົງລາຍເຊັນດຳລັດວ່າດ້ວຍການກວດກາການຄ້າ ແລະເພື່ອໃຫ້ວຽກກວດກາການຄ້າດຳເນີນໄປເປັນປົກກະຕິໃນຂອບເຂດການກວດກາການຄ້າ ທີ່ເກີດຂຶ້ນພາຍໃນປະເທດຄື:

1. ກວດກາການຄ້າສິນຄ້າທີ່ລະເມີດລະບຽບການຄຸ້ມຄອງການຄ້າ;
2. ກວດກາການດຳເນີນທຸລະກິດທີ່ລະເມີດລະບຽບການຄຸ້ມຄອງທະບຽນວິສາຫະກິດ ແລະ
3. ກວດກາການຄ້າສິນຄ້ານອກລະບົບ.

ກະຊວງອຸດສາຫະກຳ ແລະ ການຄ້າຈຶ່ງແນະນຳໃຫ້ພະແນກອຸດສາ ຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງປະຕິບັດດັ່ງນີ້:

1. ຊີ້ນຳໃຫ້ໜ່ວຍງານ ກວດກາການຄ້າເຄື່ອນໄຫວໃນ 3 ຂອບເຂດການກວດກາການຄ້າດັ່ງທີ່ກ່າວມາຂ້າງເທິງນີ້ຢ່າງເຂັ້ມງວດ;

2. ຜູ້ຈະໄປກວດກາແຕ່ລະຄັ້ງ ຕ້ອງໄດ້ຮັບການຕົກລົງແຕ່ງຕັ້ງຈາກ ຫົວໜ້າພະແນກ ຫລືຮອງພະແນກ ຫລືຜູ້ທີ່ໄດ້ຮັບການມອບໝາຍ ແລະຜູ້ທີ່ຖືກແຕ່ງຕັ້ງໄປກວດການັ້ນຈຶ່ງກາຍເປັນເຈົ້າໜ້າທີ່ກວດກາການຄ້າ, ມີບັດເຈົ້າໜ້າທີ່ ກວດກາການຄ້າ ແລະມີເຄື່ອງແບບຄັກແນ່. ການໄປກວດກາແຕ່ລະຄັ້ງຕ້ອງມີຢ່າງໜ້ອຍ 3 ຄົນ. ໃນກໍລະນີຮີບດ່ວນ, ມີແຫລ່ງຂ່າວເຊື່ອຖືໄດ້, ຫົວໜ້າ ຫລືຮອງພະແນກ ຫລືຜູ້ທີ່ຖືກມອບໝາຍ, ສາມາດສັ່ງໃຫ້ພະນັກງານກວດກາການຄ້າໄປ ກວດກາໄດ້, ໂດຍບໍ່ຈຳເປັນຕ້ອງມີຂໍ້ຕົກລົງເປັນລາຍລັກອັກສອນ, ແຕ່ຕ້ອງແມ່ນ ຜູ້ທີ່ມີບັດເຈົ້າໜ້າທີ່ກວດກາການຄ້າ. ພາຍຫຼັງການກວດກາສຳເລັດແລ້ວ ຜູ້ຖືກແຕ່ງຕັ້ງໄປກວດກາຕ້ອງລາຍງານ ຜົນການກວດກາດັ່ງກ່າວ ໃຫ້ຜູ້ແຕ່ງຕັ້ງ ຫຼືຜູ້ສັ່ງໃຫ້ກວດກາຊາບ ແລະພິຈາລະນາໂດຍດ່ວນ; ແຕ່ຖ້າເປັນເລື່ອງເກີນສິດອຳນາດຂອງ ພະແນກອຸດສາຫະກຳ ແລະ ການຄ້າແຂວງ ຫຼື ນະຄອນຫຼວງ, ທາງພະແນກອຸດສາຫະກຳ ແລະ ການຄ້າແຂວງ ຫຼື ນະຄອນຫຼວງກໍຕ້ອງໄດ້ ສົ່ງເລື່ອງໃຫ້ກົມການຄ້າພາຍໃນ ຊາບ ເພື່ອມີທິດຊີ້ນຳໃນການພິຈາລະ ນາ ແລະ ແກ້ໄຂຊ່ວຍ.

ສຳລັບຂັ້ນເມືອງ ກໍແມ່ນຫົວໜ້າ ຫຼື ຮອງຫົວໜ້າຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ (ຜູ້ທີ່ໄດ້ຮັບການມອບໝາຍ) ເປັນຜູ້ແຕ່ງຕັ້ງ ຫຼື ອອກຄຳສັ່ງໃຫ້ກວດກາ ຢູ່ພາຍໃນຂອບເຂດເມືອງຂອງຕົນ, ພາຍຫຼັງການກວດກາສຳເລັດ ກໍຕ້ອງລາຍງານຜົນການກວດກາ ໃຫ້ຫົວໜ້າ ຫຼື ຮອງຫົວໜ້າຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ (ຜູ້ທີ່ໄດ້ຮັບການມອບໝາຍ)ຊາບ ແລະພິຈາລະນາ, ແຕ່ຖ້າເປັນເລື່ອງເກີນສິດອຳນາດຂອງຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ, ທາງຫ້ອງການອຸດສາຫະກຳ ແລະ ການຄ້າເມືອງຕ້ອງສົ່ງເລື່ອງໃຫ້ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ ຫຼື ນະຄອນຫຼວງ ຊາບ ແລະມີທິດ ຊີ້ນຳໃນການ ແກ້ໄຂ;

3. ພະນັກງານທີ່ມີບັດເຈົ້າໜ້າທີ່ກວດກາການຄ້າ, ມີເຄື່ອງແບບແມ່ນສາມາດຖືກແຕ່ງຕັ້ງເຄື່ອນໄຫວປົກກະຕິ. ສຳລັບພະນັກງານໃໝ່ ທີ່ບໍ່ທັນມີບັດເຈົ້າໜ້າທີ່ກວດກາການຄ້າ ແລະເຄື່ອງແບບ ແມ່ນໃຫ້ຊ່ວຍວຽກຢູ່ຫ້ອງ ການກ່ອນ, ບໍ່ອະນຸຍາດໃຫ້ອອກເຄື່ອນໄຫວວຽກງານກວດກາໄດ້, ໃນກໍລະນີທີ່ຈຳເປັນກໍສາມາດໃຫ້ໄປກັບຜູ້ທີ່ມີບັດ ແລະເຄື່ອງແບບທີ່ຖືກແຕ່ງຕັ້ງໃຫ້ໄປກວດການັ້ນໄດ້;

4. ຫ້າມເດັດຂາດບໍ່ໃຫ້ພະນັກງານກວດກາການຄ້າ ຫລືເຈົ້າໜ້າທີ່ກວດກາການຄ້າອອກກວດກາ ໂດຍພາລະການ. ຫາກມີການລະເມີດຈະຖືກສຶກສາອົບຮົມ, ກ່າວເຕືອນ, ຍົກຍ້າຍໜ້າທີ່, ປົດຕຳແໜ່ງ ຫຼືໄລ່ອອກຈາກລັດຖະການ, ຮັບຜິດຊອບທາງ ແພ່ງ ຫຼືອາຍາ ຕາມກໍລະນີເບົາ ຫຼືໜັກ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ປະຕິບັດຕາມນີ້ດ້ວຍ.

ລັດຖະມົນຕີວ່າການ

ກະຊວງອຸດສາຫະກຳ ແລະ ການຄ້າ

ດຣ. ນາມ ວິຍະເກດ